ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ .11../ສພຂ.ຊຍ

ໄຊຍະບູລີ, ວັນທີ .17.ເມສາ 2026

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາກົງຈັກຂອງສະພາປະຊາຊົນແຂວງ, ການແຕ່ງຕັ້ງ ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ

- ອີງຕາມ ມາດຕາ 78 ຂໍ້ທີ 4 ແລະ ຂໍ້ທີ 5 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ (ສະບັບປັບປຸງ 2025).
- ອີງຕາມ ມາດຕາ 53 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ2024.
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບກົງຈັກການຈັດຕັ້ງ ແລະ ເປົ້າໝາຍຜູ້ທີ່ສະເໜີ ແຕ່ງຕັ້ງເປັນ ປະທານກຳມະການ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ V ລົງວັນທີ 9 ເມສາ 2026.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳເຫັນຢ່າງເລິກເຊິ່ງກວ້າງຂວາງ ຂອງບັນດາທ່ານສະມາຊິກສະພາປະຊາຊົນ ແຂວງ ຕໍ່ການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ຢູ່ໃນກອງປະຊຸມຄັ້ງປະຖົມມະລືກ ຂອງສະພາປະຊາຊົນແຂວງ ຊຸດທີ V ໃນວາລະຕອນເຊົ້າ ຂອງວັນທີ 9 ເມສາ 2026.

### ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາກົງຈັກຂອງສະພາປະຊາຊົນແຂວງ ຊຸດທີ V ຈຳນວນ 3 ຄະນະກຳມະການ ແລະ ຫ້ອງວ່າການສະພາ ປະຊາຊົນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ດັ່ງນີ້:

1. ຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ;
2. ຄະນະກຳມະການ ວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
3. ຄະນະກຳມະການ ເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ;
4. ຫ້ອງວ່າການສະພາປະຊາຊົນແຂວງ;

**ມາດຕາ 2** ຮັບຮອງເອົາການແຕ່ງຕັ້ງປະທານຄະນະກຳມະການ, ຫົວໜ້າຫ້ອງວ່າການ ສະພາປະຊາຊົນແຂວງ ຊຸດທີ V ຈຳນວນ 4 ທ່ານ ດັ່ງນີ້:

| | | |
|---|---|---|
| 1. | ທ່ານ ກາວີ ເກດດີມລີ | ກຳມະການພັກແຂວງ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ; |
| 2. | ທ່ານ ນາງ ວັນນາ ພົມວິສອນ | ກຳມະການພັກແຂວງ ເປັນປະທານຄະນະກຳມະການ ວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ; |
| 3. | ທ່ານ ປອ ແອວເພັດ ສີບຸນມາ | ເປັນປະທານຄະນະກຳມະການ ເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ; |
| 4. | ທ່ານ ເສັງວິໄລ ສິງ | ເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ; |

**ມາດຕາ 3** ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ບັນດາທ່ານທີ່ ຖືກເລືອກຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງມີວັນ ຄຳພັນເພັງ

ສแกนด้วย CamScanner